

**ການຈັບກົບລ້ຽງຂາຍໄດ້ຫຼາຍຄັ້ງ**

## 5. ການບົວລະບັດຮັກສາ ແລະ ການເກັບຜົນຜະລິດ

- ບໍ່ຄວນລ້ຽງກົບໃນຍາມໜາວເພາະກົບບໍ່ກິນອາຫານ ແລະ ມີການຕະເລີນເຕີບຊ້າ ຫຼື ເກີດເປັນພະຍາດໄດ້ງ່າຍ.
- ຖ້າລ້ຽງໃນອ່າງຄວນອານະໄມ ແລະ ປ່ຽນນໍ້າເປັນປະຈຳ ເພື່ອເຮັດໃຫ້ກົບກິນອາຫານໄດ້ດີ ແລະ ໃຫຍ່ໄວ.
- ການລ້ຽງກົບຄວນສ້າງບ່ອນລີ້ໃຫ້ກົບອາໃສ່ຢູ່ ເຊັ່ນ: ຜັກຕົບ, ຜັກບົ້ງ ແລະ ໄມ້ໄຜ່.
- ການໃຫ້ອາຫານກົບຄວນໃຫ້ພໍເໝາະກັບຄວາມຕ້ອງການ, ຖ້າໃຫ້ຫຼາຍເກີນໄປຈະເຮັດໃຫ້ນໍ້າເນົ່າ.
- ເມື່ອກົບມີຂະໜາດໃຫຍ່ຕາມຄວາມຕ້ອງການຂອງຕະຫຼາດ ສາມາດຈຳໜ່າຍ ຫຼື ກິນໄດ.
- ການຄັດເລືອກກົບເພື່ອຈຳໜ່າຍ ຄວນຄັດເອົາກົບທີ່ມີຂະໜາດໃຫຍ່ຂາຍກ່ອນ ແລະ ຈຶ່ງຂະໜາດນ້ອຍໄວ້.



**ຜັກຕົບເປັນບ່ອນລີ້ຊ້ອນໃຫ້ກົບອາໃສ່ຢູ່**



**ຜົນຜະລິດຈາກການລ້ຽງກົບ**

ອອກແບບ ແລະ ຈັດໜ້າໂດຍ:
ທີມງານ
ສະຖາບັນຄົ້ນຄ້ວາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ

ສູນຄົ້ນຄວ້າການປະມົງ
ບ້ານຈັນສະຫວ່າງ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ
ສ ປປ ລາວ.
ໂທ: +856 20 98976875
E-mail : oulaytham02@hotmail.com

**ກະຊວງກະສິກຳ ແລະ ສິ່ງແວດລ້ອມ**

# ຂັ້ນຕອນເຕັກນິກ
# ການລ້ຽງກົບໃນຄອກຢູ່ພື້ນທີ່ປູກຜັກສວນຄົວ



**ໂຄງການກະສິກຳ ເພື່ອໂພຊະນາການ ໄລຍະ 2**
**ພຶດສະພາ, 2025**

## 1. ການເລືອກສະຖານທີ່

- ສະຖານທີ່ຄວນຢູ່ໃກ້ໝູ່ບ້ານ ແລະ ເຮືອນຄົນ, ເພື່ອ
- ສະດວກໃນການບົວລະບັດຮັກສາ.
- ພື້ນທີ່ປູກຜັກສວນຄົວຄວນມີເນື້ອທີ່ຂະໜາດ 10x20 ແມັດຂຶ້ນໄປ
- ສະຖານທີ່ລ້ຽງຄວນຢູ່ໃກ້ແຫຼ່ງນໍ້າ ເຊັ່ນ: ແມ່ນໍ້າ, ຫ້ວຍ, ອ່າງເກັບນໍ້າ, ນໍ້າລິນ ແລະ ຊົນລະປະທານ ເພື່ອນຳໃຊ້ນໍ້າເຂົ້າໃນການປູກຜັກ ແລະ ການລ້ຽງກົບໄດ້ຕະຫຼອດປີ.

## 2. ການກຽມຄອກໜອງດິນ ຫຼື ອ່າງຊີມັງ
### 2.1 ການກຽມຄອກໜອງດິນ

- ສະຖານທີ່ລ້ຽງຕ້ອງມີພື້ນທີ່ພຽງ ສຳຫຼັບສ້າງຄອກຕາໜ່າງຂຽວຂະໜາດ 2x3 ແມັດ ຫຼື 3x4 ແມັດ, ສ້າງໜອງ ຜ້າຢາງຂະໜາດ (0.6x0.6 ແມັດ) ເລິກ 15 ຊັງຕີແມັດ, 2 ອ່າງ ແລະ ເຮັດບ່ອນໃຫ້ອາຫານ.
- ໜອງຜ້າຢາງຕ້ອງໃສ່ທໍ່ລະບາຍ ເພື່ອປ່ຽນຖ່າຍເວລານ້ຳເນົ່າເສຍ ຫຼື ສາມາດປ່ຽນນ້ຳໄດ້ທຸກວັນຈະດີທີ່ສຸດ.
- ຄອກລ້ຽງກົບຄວນມີຂະໜາດ 2x3, 3x4 ແມັດ, 4x6 ແລະ 6x8 ແມັດ ຕາມຄວາມເໝາະສົມຂອງພື້ນທີ່.



ຮູບແບບການລ້ຽງກົບໃນຄອກໜອງດິນ

### 2.2 ອ່າງຊີມັງ

- ການລ້ຽງກົບໃນອ່າງຊີມັງ ສາມາດລ້ຽງໄດ້ໃນພື້ນທີ່ຈຳກັດຂອງສວນຄົວ.
- ແຕ່ສາມາດສ້າງຄອກກົບຮູບແບບອ່າງສີ່ຫຼ່ຽມ ຂະໜາດ 2x3 ຫຼື 3x4 ແມັດ ແລະ ສູງ 60 ຫາ 70 ຊມ, ນອກຈາກນີ້ຍັງສາມາດນຳໃຊ້ອ່າງແບບສຳເລັດຮູບ ຂະໜາດໜ້າຕັດ 1 ແມັດ ຫຼື 1.2 ແມັດ ແລະ ສູງ 50 ຊມ.
- ລະບົບອ່າງຕ້ອງມີທໍ່ລະບາຍ ນການປ່ຽນຖ່າຍນ້ຳ.



ຮູບການສ້າງອ່າງລ້ຽງກົບແບບສີ່ຫຼ່ຽມ



ຮູບການສ້າງອ່າງລ້ຽງກົບແບບອ່າງກົມ

## 3. ການຄັດເລືອກແນວພັນ

- ລູກກົບທີ່ນຳມາລ້ຽງຕ້ອງມີຂະໜາດ 2 ຊມ ຂຶ້ນໄປ ຫຼື ຂະໜາດເທົ່າຫົວໂປ້ມື.
- ລູກກົບຕ້ອງມີຄວາມສົມບູນ, ແຂງແຮງດີ ແລະ ມີຂະໜາດເທົ່າກັນເພື່ອບໍ່ໃຫ້ລູກກົບກິນກັນເອງໃນເວລາລ້ຽງ.

**ຕາຕະລາງທີ 1: ອັດຕາການປ່ອຍລູກກົບລ້ຽງ**

| ຮູບແບບການລ້ຽງ | ຂະໜາດ (ແມັດ) | ຈຳນວນກົບປ່ອຍ (ໂຕ) |
|---|---|---|
| ການລ້ຽງໃນອ່າງດິນ ຫຼື ອ່າງຊີມັງ | 2x3 | 500 |
| | 4x4 | 1,000 |
| | 6x8 | 2,500 |



**ລັກສະນະລູກກົບທີ່ມີຂະໜາດເທົ່າກັນ**

## 4. ປະເພດອາຫານ ແລະ ການໃຫ້ອາຫານ

- ສຳລັບອາຫານແມ່ນອາຫານສຳເລັດຮູບກົບ ຫຼື ປາດຸກ ແລະ ມີທາດໂປຼຕີນ 30-35%.
- ການໃຫ້ອາຫານກົບນ້ອຍຄວນໃຫ້ປະມານ 10% ແລະ ກົບໃຫຍ່ແມ່ 3% ຂອງນ້ຳໜັກກົບຕໍ່ວັນ ແລະ ໃຫ້ 2 ຄັ້ງ (ຕອນເຊົ້າ ແລະ ແລງ).
- ອາຫານຈາກທຳມະຊາດເປັນອາຫານເສີມ ເຊັ່ນ: ຂີ້ກະເດືອນ, ປວກ ແລະ ແມງໄມ້ຊະນິດຕ່າງໆ.
- ຖ້າລ້ຽງກົບໃນໜອງຜ້າຢາງ ຫຼື ອ່າງຊີມັງ ສາມາດເປີດດອກໄຟໃສ່ໃນກາງຄືນເພື່ອໃຫ້ແມງໄມ້ມາເປັນອາຫານກົບ.

**ຕາຕະລາງທີ 2: ອັດຕາການໃຫ້ອາຫານກົບທີລ້ຽງໃນຄອກ ຫຼື ໜອງຜ້າຢາງຈຳນວນ 500 ໂຕ**

| ລ/ດ | ໄລຍະເວລາການລ້ຽງ (ວັນ) | ອັດຕາການໃຫ້ອາຫານກຼາມ/ວັນ |
|---|---|---|
| 1 | ໄລຍະເວລາ 50 ວັນ | 200 ກຼາມ/ວັນ |
| 2 | ໄລຍະເວລາ 60 ວັນ | 300 ກຼາມ/ວັນ |
| 3 | ໄລຍະເວລາ 90 ວັນ | 700 ກຼາມ/ວັນ |
| 4 | ໄລຍະເວລາ 120 ວັນ | 1,500 ກຼາມ/ວັນ |
| 6 | ໄລຍະເວລາ 150 ວັນ | 2,000 ກຼາມ/ວັນ |